ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ...47.../ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 14.1.2020

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ນັບຖື.
- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.
- ທ່ານ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.
- ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ເລື່ອງ: ທິດຊີ້ນຳກ່ຽວກັບການແກ້ໄຂບັນຫາທີ່ຕັ້ງຂຶ້ນໃນກອງປະຊຸມທຸລະກິດລາວ ຄັ້ງທີ 12.

- ອີງຕາມ ການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຕໍ່ກອງປະຊຸມທຸລະກິດລາວ ຄັ້ງທີ 12 ໃນວັນທີ 12 ພະຈິກ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້: **1/- ເຫັນດີອະນຸມັດດ້ານຫຼັກການໃຫ້ສ້າງຕັ້ງໜ່ວຍງານສະເພາະກິດ (Task Force) ຮ່ວມກັນລະຫວ່າງລັດ ແລະ ທຸລະກິດ 10 ໜ່ວຍງານ ເພື່ອປັບປຸງເວທີທຸລະກິດລາວ ໃຫ້ມີປະສິດທິຜົນຂຶ້ນ ຕາມການສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ. ໂດຍໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງ ອຸດສາຫະກຳ ແລະ ການຄ້າ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນເຈົ້າການໃນການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບກົນໄກ ແລະ ວິທີການໃນການຈັດຕັ້ງປະຕິບັດ ໂດຍໃຫ້ມີການຖອດຖອນບົດຮຽນຈາກສາກົນ ຢ່າງລະອຽດ. ຈາກນັ້ນ ຈຶ່ງລາຍງານລັດຖະບານ ເພື່ອພິຈາລະນາ.**

2/- ໃຫ້ກະຊວງການເງິນ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂບັນຫາ ທີ່ພາກທຸລະກິດ ໄດ້ຍົກຂຶ້ນໃນກອງປະຊຸມ ຄື: 1.) ຄຳແນະນຳຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ສະບັບປັບປຸງ; 2.) ຄົ້ນຄວ້າພິຈາລະນາກ່ຽວກັບການສະເໜີສົ່ງຄືນເງິນອາກອນມູນຄ່າເພີ່ມ ຕາມກຳນົດເວລາ ທີ່ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ກຳນົດ; 3.) ໃຫ້ຄົ້ນຄວ້າກ່ຽວກັບການສະເໜີຂໍລຶບລ້າງການອະນຸມັດ ລາຍການຂົນສົ່ງສິນຄ້າຜ່ານແດນທີ່ທຸລະກິດຕ້ອງຂໍລ່ວງໜ້າ; 4.) ປະສານກັບກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອກຳນົດທິດທາງ ແລະ ມາດຕະການແກ້ໄຂບັນຫາ ການນຳເຂົ້າ ແລະ ຈຳໜ່າຍສິນຄ້າ

ທີ່ບໍ່ໄດ້ຜ່ານການຊໍາລະພາສີ ແລະ ອາກອນ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ແລະ 5.) ໃຫ້ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 19 ທັນວາ 2012 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ໃຫ້ສໍາເລັດພາຍໃນງວດທີໜຶ່ງ ຂອງປີ 2020.

3/- ໃຫ້ກະຊວງແຜນການ ແລະ ການລົງທຶນ: 1.) ຄົ້ນຄວ້າ ແລະ ປັບປຸງ ຂັ້ນຕອນການຂໍອະນຸຍາດລົງທຶນ ໃຫ້ມີຄວາມຈະແຈ້ງ, ວ່ອງໄວ ແລະ ບໍ່ຊໍ້າຊ້ອນກັບຂອດອະນຸຍາດຂອງຂະແໜງການ; 2.) ຮີບຮ້ອນຄົ້ນຄວ້າພິຈາລະນາຄືນກ່ຽວກັບກິດຈະການຢູ່ໃນບັນຊີຄວບຄຸມ ທີ່ເຫັນວ່າຍັງມີຂໍ້ຈໍາກັດຫຼາຍເກີນໄປ ແລະ ບໍ່ເປັນການດຶງດູດການລົງທຶນເທົ່າທີ່ຄວນ; 3.) ຄົ້ນຄວ້າ ແລະ ປັບປຸງ ຂັ້ນຕອນການອະນຸມັດແຜນການນໍາເຂົ້າ ເພື່ອໃຫ້ຊັດເຈນ ແລະ ວ່ອງໄວຂຶ້ນ; 4.) ສົມທົບກັບກະຊວງການເງິນ ເພື່ອປຶກສາຫາລືຄົ້ນຄ້ວາກ່ຽວກັບການຍົກເວັ້ນອາກອນມູນຄ່າເພີ່ມ ໃຫ້ແກ່ບັນດາໂຄງການທີ່ໄດ້ຮັບການຍົກເວັ້ນພາສີ-ອາກອນ ທີ່ຊື້ສິນຄ້າທີ່ຜະລິດພາຍໃນປະເທດ.

4/- ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ: 1.) ເປັນເຈົ້າການສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການປັບປຸງຂັ້ນຕອນການເລີ່ມຕົ້ນທຸລະກິດ (ການຂຶ້ນທະບຽນວິສາຫະກິດ ແລະ ການອອກອະນຸຍາດດໍາເນີນທຸລະກິດ) ໃຫ້ສະດວກ, ວ່ອງໄວ ແລະ ເປັນເອກະພາບກັນທົ່ວປະເທດ, ພ້ອມທັງສ້າງຊ່ອງທາງ ແລະ ເຜີຍແຜ່ຂໍ້ມູນ-ຂ່າວສານ ທີ່ຕິດພັນກັບເງື່ອນໄຂການຂໍອະນຸຍາດດໍາເນີນທຸລະກິດ ໃຫ້ມີຄວາມຈະແຈ້ງ ແລະ ເຂົ້າເຖິງໄດ້ງ່າຍຂຶ້ນ; 2.) ສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີການລົງກວດກາຜູ້ນໍາເຂົ້າ, ຜູ້ຈັດຈໍາໜ່າຍ ແລະ ຜູ້ປະກອບການດ້ານການບໍລິການ ຢ່າງເຂັ້ມງວດ ເພື່ອແກ້ໄຂບັນຫາການແຂ່ງຂັນຈາກທຸລະກິດ ທີ່ບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການ.

5/- ໃຫ້ທະນາຄານແຫ່ງ ສປປ ລາວ: 1.) ສືບຕໍ່ການປັບປຸງລະບົບຖານຂໍ້ມູນສິນເຊື່ອແຫ່ງຊາດ, ເຮັດໃຫ້ມີຂໍ້ມູນຄົບຖ້ວນ ແລະ ເຊື່ອຖືໄດ້; 2.) ເປັນເຈົ້າການສົມທົບກັບ ສານປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາຫຼຸດຜ່ອນບາງຂັ້ນຂອດ ທີ່ບໍ່ຈໍາເປັນ ແລະ ຄ່າທໍານຽມຕ່າງໆ ທີ່ຕິດພັນກັບການຈົດທະບຽນສັນຍາເງິນກູ້ ແລະ ຫຼັກຊັບຄໍ້າປະກັນ ເພື່ອໃຫ້ການເຂົ້າຫາແຫຼ່ງທຶນຂອງຜູ້ປະກອບການມີຄວາມສະດວກ ແລະ ຕົ້ນທຶນຕໍ່າລົງ.

6/- ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ: 1.) ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສຶກສາຄວາມເປັນໄປໄດ້ ໃນການສ້າງຕັ້ງຄະນະກໍາມະການສົ່ງເສີມການທ່ອງທ່ຽວ ຂອງ ສປປ ລາວ ໃຫ້ເປັນອົງກອນເອກະລາດ ເພື່ອນໍາພາດ້ານການຕະຫຼາດ ແລະ ການສົ່ງເສີມການທ່ອງທ່ຽວ ໂດຍໃຫ້ພາກທຸລະກິດຈາກຂະແໜງການທີ່ປິ່ນອ້ອມການທ່ອງທ່ຽວ ແລະ ພາກລັດທີ່ກ່ຽວຂ້ອງຫຼາຍຝ່າຍ ເປັນຄະນະສະພາບໍລິຫານ ແລະ ມີທີມງານບໍລິຫານທີ່ເປັນມືອາຊີບ ເປັນຜູ້ຈັດຕັ້ງປະຕິບັດວຽກງານ. ພາຍຫຼັງປຶກສາຫາລື ແລະ ເປັນເອກະພາບກັນແລ້ວ ຈຶ່ງລາຍງານລັດຖະບານ ເພື່ອຂໍທິດຊີ້ນໍາ; 2.) ທົບທວນຄືນການຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍກອງທຶນການທ່ອງທ່ຽວ ເລກທີ 119/ລບ, ລົງວັນທີ 10/04/2017 ເພື່ອຫັນລະບົບການເກັບເງິນແບບເກົ່າໄປສູ່ລະບົບການເກັບທັນສະໄໝ ແລະ ການນໍາໃຊ້ກອງທຶນສົ່ງເສີມການທ່ອງທ່ຽວໃຫ້ມີປະສິດທິຜົນກ່ວາເກົ່າ ເພື່ອຮັບປະກັນຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້; 3.) ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ເພື່ອແກ້ໄຂຂໍ້ຫຍຸ້ງຍາກຂອງການອະນຸມັດ ໃບແຈ້ງລາຍຊື່ນັກທ່ອງທ່ຽວ ໃຫ້ມີຄວາມສະດວກ ແລະ ມີລະບົບຄຸ້ມຄອງທີ່ທັນສະໄໝຂຶ້ນ; 4.) ປະສານກັບຂະແໜງການກ່ຽວຂ້ອງ ສ້າງນິຕິກໍາຮອງຮັບສະເພາະ ທີ່ເອື້ອອໍານວຍໃຫ້ແກ່ການພັດທະນາການທ່ອງທ່ຽວທີ່ອີງໃສ່ທໍາມະຊາດ, ແນໃສ່ຫຼຸດຜ່ອນຂອດຂັ້ນການອະນຸຍາດສໍາປະທານ ແລະ ຄ່າທໍານຽມທີ່ຕິດພັນກັບການສໍາປະທານພື້ນທີ່ປ່າສະຫງວນເພື່ອການທ່ອງທ່ຽວທາງທໍາມະຊາດ ແລະ ຄ່າທໍານຽມ ທີ່ຕິດພັນກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ; 5.) ປະສານສົມທົບກັບ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອກໍານົດມາດຕະການທີ່ຊັດເຈນ ແລະ ເປັນລະບົບ ໃນການຈັດການບັນຫາມົນລະພິດທາງອາກາດ, ທາງນໍ້າ ແລະ ບັນຫາຂີ້ເຫຍື້ອທີ່ຊະຊາຍ ທີ່ສົ່ງຜົນທາງລົບໃຫ້ແກ່ການທ່ອງທ່ຽວ ຂອງແຫຼ່ງທ່ອງທ່ຽວທີ່ສໍາຄັນຢູ່ ສປປ ລາວ; 6.) ເປັນເຈົ້າການປະສານສົມທົບກັບຂະແໜງການ

ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກກ່ຽວກັບການຂໍອະນຸມັດຈັດການແຂ່ງຂັນກິລາປະເພດກະຕຸ້ນການທ່ອງທ່ຽວ ແລະ ຄວນຕັດບາງຂອດຂັ້ນອະນຸມັດລົງ ຫຼື ກຳນົດໄລຍະເວລາການອະນຸມັດ ທີ່ແນ່ນອນ.

7/- ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສົມທົບກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງນະໂຍບາຍທີ່ຈະສະໜັບສະໜູນການກໍ່ຕັ້ງ ແລະ ດຳເນີນທຸລະກິດແບບສະຕາດອັບ **(Startup)** ທີ່ນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີ ທີ່ທັນສະໄໝ.

8/-ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າປຶກສາຫາລືກ່ຽວກັບການສະໜີຂໍຫຼຸດຜ່ອນອັດຕາຄ່າໄຟຟ້າ ສຳລັບຂະແໜງການບໍລິການ ໃຫ້ເທົ່າກັນກັບຂະແໜງອຸດສະຫະກຳ ເພື່ອເພີ່ມສະມັດຕະພາບການແຂ່ງຂັນຂອງຂະແໜງບໍລິການ ຢ່າງລະອຽດ.ຈາກນັ້ນ, ຈຶ່ງລາຍງານລັດຖະບານ ເພື່ອມີທິດຊີ້ນຳ.

9/- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມການແກ້ໄຂບັນຫາ ທີ່ໄດ້ຍົກຂຶ້ນຜ່ານກົນໄກກອງປະຊຸມທຸລະກິດລາວ ແລະ ລາຍງານຄວາມຄືບໜ້າຕໍ່ລັດຖະບານ ທຸກ 06 ເດືອນ.

ດັ່ງນັ້ນ, ຈຶ່ງຂໍເປັນການແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ສານປະຊາຊົນສູງສຸດ | 01 ສະບັບ |
| 4. ຄະນະ ຫສນບ | 04 ສະບັບ |
| 5. ກົມຄົ້ນຄວ້າ-ສັງລວມ, ຫສນບ | 01 ສະບັບ |
| 6. ກົມສາລາການ, ຫສນບ | 01 ສະບັບ |
| 7. ສຳເນົາ | 01 ສະບັບ |